# ວັນວານຍັງຫວານຢູ່



- ຕອນທີໝຜ: ຄືນກ່ອນຈາກ
- ຕອນທີໝຖ: ແລະແລ້ວ ວັນເວລາ ທີ່ພາກຈາກກັນ ກໍວຽນມາເຖິງ

## ຕອນທີໝຜ ຄືນກ່ອນຈາກ

ລະຍະກ່ອນຊິຮອດຄືນສຸດທ້າຍທີ່ເຈົ້າຢູ່ນາໂພນັ້ນ ເຈົ້າວ່າ ມີຫຍັງຢາກເຕືອນ
ຢາກບອກຂ້ອຍກໍໃຫ້ເວົ້າມາ ບາດຮອດຄືນສຸດທ້າຍແລ້ວ ຂ້ອຍບໍ່ໃຫ້ເຈົ້າເວົ້າເດີ
ຕອນນັ້ນຂອ້ຍກະບັງເອີນບໍ່ໄດ້ຢູ່ໃນຈິນຕະນາການຈະເວົ້າຈະເອີຍຫຍັງເລີຍ
ເພາະນິໃສຂ້ອຍມັກເວົ້າເລື້ອງສຳຄັນມື້ສຸດທ້າຍ ມັນຈຶ່ງຈີ່ດີນ
ດັ່ງນັ້ນແຕ່ລະຄືນຈຶ່ງຜ່ານໄປຢ່າງເກືອບຈະໄຮ້ການສັ່ງລາ ມີແຕ່ດວງຕາເທົ່ານັ້ນເປັນສີ່ບອກວ່າ
ຂ້ອຍຮັກແລຫ່ວງໃຍເຈົ້າບໍ່ຄາຍ ແລະແລ້ວຄືນສຸດທ້າຍກໍມາເຖິງ
ຄືນນັ້ນກະບັງເອີນພວກຜູ້ໃຫຍ່ໃນອາຄານມີການລ້ຽງສົ່ງພໍ່
ເຈົ້າກະເລີຍຖືໂອກາດໄປສັ່ງລາແມ່ຕູ້ນາງແດງ ນາງນ້ອຍແລະນາງແປັດອີກ
ຊຶ່ງກ່ວາໆຈະກັບຄືນຮອດເຮືອນ ກໍເກົ້າໂມງປາຍແລ້ວ ຕອນນັ້ນຂ້ອຍກະຄິດບໍ່ພໍໃຈແດ່
ແນວເຈົ້າຖືຜູ້ອື່ນສຳຄັນກ່ວາຂ້ອຍ

ດັ່ງນັ້ນຂ້ອຍກໍເລີຍຝຸນຜັນດ້ວຍຂາດການຍັ້ງຄິດປີບເມືອເຮືອນເລີຍ
ຫລັງຈາກມາສົ່ງເຈົ້າຮອດເຮືອນຮອດຊານແລ້ວ

ຄືນນັ້ນ ເຖິງຂ້ອຍຈະພະຍາຍາມປານໃດກໍຕາມ ຂ້ອຍກໍນອນບໍ່ຄ່ອຍຫລັບ
ເຫດດ້ວຍນ້ອຍເນື້ອຕໍ່າໃຈທີ່ບໍ່ຫນ້າເລີຍ ການຈາກກັນຂອງພວກເຮົາ
ຈະລົງເອີຍດ້ວຍຄວາມບໍ່ເຂົ້າໃຈໃນຄວາມຮູ້ສຶກຂອງກັນແລະກັນແບບນັ້ນ
ພໍເມື່ອຮຸ່ງເຊົ້າຂອງວັນໃຫມ່ມາ ຂ້ອຍກໍບໍ່ມີກະຈິດກະໃຈຢາກໄປເຮືອນເຈົ້າແຕ່ເຊົ້າຄືທຸກມື້ເລີຍ
ເຈົ້າຄົງຈະຮູ້ຄືກັນວ່າຂ້ອຍບໍ່ພໍໃຈເຈົ້າ ຈຶ່ງສົ່ງແອຫນ່ອຍໄປຫາແຕ່ເຊົ້າ ຂ້ອຍກະເລີຍມາ
ແຕ່ເຈົ້າກໍຕ້ອນຮັບຂ້ອຍດ້ວຍອາການເສີຍເມີຍ ຕອນນັ້ນມີການຫໍ່ເຄື່ອງທີ່ຍັງເຫລືອຢູ່ສາມສີ່ແກັດ
ດ້ວຍວ່າຄົນຫລາຍແລ້ວ ແລະຂ້ອຍກະບໍ່ເປັນແດ່ເລື້ອງມັດຫັ້ນ ຂ້ອຍຈຶ່ງບໍ່ໄດ້ຊ່ອຍຫຍັງ
ຂ້ອຍຄິດໃນໃຈວ່າ ເຈົ້າບອກມາຫາກໍເພື່ອຈະປັບຄວາມເຂົ້າໃຈກັນ
ແຕ່ບາດທີ່ແທ້ກັບມາປະທະຄາລົມກັນອີກ ເຈົ້າກໍເລີຍປີບເອີ່ນໆໄປກັບແມ່ ວ່າຊິໄປສັ່ງແມ່ນາງຕູ່
ຂ້ອຍວ່າຈະຂໍໄປນໍາ ເຈົ້າກໍບໍ່ຍອມໃຫ້ໄປ ຂ້ອຍກໍເລີຍຕ້ອງໄດ້ນັ່ງຄ້ອກມ້ອກຢູ່ເຮືອນຜູ້ດຽວ

ພໍດີປະມານເກົ້າໂມງ ພວກນາງແດງນາງພອນນາງຕຸ້ຍກະມາ ເຮັດນັ້ນຊ່ອຍນີ້ພວກເຈົ້າ
ເຂົາເຈົ້າເຫັນຂ້ອຍເສົ້າໆກະເລີຍຖາມວ່າ “ເປັນຫຍັງ?” ຂ້ອຍວ່າຜິດກັບເຈົ້າ ເຂົາເຈົ້າຈຶ່ງວ່າ
“ບໍ່ຫນ້າເລີຍ ມື້ຊິໄປແທ້ໆ ກະຍັງເປັນແບວນີ້ໄດ້” ເຂົາເຈົ້າເວົ້າຕື່ມອີກວ່າ “ອ້າຍແກ້ວ
ເຈົ້າຄວນໄປງອນງໍ້ລາວ ແມັດລາວຄຽດໄວຫາຍໄວດອກ”
ຂ້ອຍກໍງຶກຫົວເປັນເຊີງຮັບເພາະກະຮູ້ຢູ່ແກ່ໃຈວ່າ ເຈົ້າຄຽດໄວແຕ່ກະຫາຍໄວດອກ
ຂ້ອຍນັ່ງລໍຖ້າອີກປະມານບໍ່ຮອດສິບຫ້ານາທີ ເຈົ້າກະກັບມາ ເພື່ອບໍ່ປະໃຫ້ໂອກາດດີໆຜ່ານໄປ
ຂ້ອຍຈຶ່ງເຂົ້າໄປຫາເຈົ້າ ຊຶ່ງສະຖານທີທີ່ເຮົາປັບຄວາມເຂົ້າໃຈກັນກໍຄືເຮືອນຄົວ
ທໍາອິດເຈົ້າກະຊິງຄືຊິຍັງຄຽດຢູ່ ຂ້ອຍເວົ້າໄປຄໍາໃດ ເຈົ້າກະຕອກຕືນມາຄໍານັ້ນ
ຈົນນ້າສາວເສື່ອມທີ່ມາຊ່ອຍຕົ້ມນໍ້າໃຫ້ພວກເຈົ້າ
ຫລຽງມາເບິ່ງພວກເຮົາດ້ວຍສີຫນ້າງຸນງົງຫລາຍເທື່ອ ແນວໃຜໆກະຮູ້ວ່າ
ເຈົ້າກັບຂ້ອຍຮັກກັນປານຈະກືນກິນ ແຕ່ເຫດໃດມື້ນັ້ນເວົ້າກັນໄປຄົນລະຮ່ອມຈົນໄດ້
ຫລັງຈາກຂ້ອຍປະໃຫ້ເຈົ້າແຝງລິດລະບາຍຄວາມຄັບຄ້ອງຫມອງໃຈອອກມາຫມົດແລ້ວ
ເຈົ້າຈຶ່ງຄ່ອຍອາລົມດີຂຶ້ນ ແລະຕໍ່ມາເຮົາສອງກະຍິ້ມແປ້ນໃສ່ກັນ

ປານວ່າບໍ່ມີເລື້ອງລາວຫຍັງເກີດຂຶ້ນນີ້ລະ ຄວາມຮັກຂອງເຮົາສອງມັນຫາກເປັນແນວນີ້ແຫລະ ຫວານໆມັນໆ ເຜັດໆເຄັມໆ ຕ່າງໆໝູ່ພິລຶກ

ເຊົ້ານັ້ນ ຫລັງຈາກເຂົ້າໃຈກັນແລ້ວ ພວກເຮົາກໍອອກມາລ້າງອັນໃດອັນນຶ່ງ ຄືຊິແມ່ນຈອກນີ້ລະ ຢູ່ນອກບ່ອນເບີກອາຫານ ດ້ວຍວ່າເວລາແຫ່ງການພັດພາກຈາກກັນຫຍັບເຂົ້າມາເລື້ອຍໆ ເຈົ້າຈຶ່ງເລີຍຖືໂອກາດນັ້ນໃຫ້ຄວາມໝັ້ນໃຈຂ້ອຍວ່າ ເຈົ້າຈະຮັກຂ້ອຍແຕ່ຜູ້ດຽວຕລອດໄປ ແລະຈະບໍ່ສົນໃຈຊາຍອື່ນໃດ ນອກຈາກຂ້ອຍເທົ່ານັ້ນ ບາງທີເຊົ້ານັ້ນ ຖ້າຝົນບໍ່ຕົກແຊະໆແດ່ ພວກເຮົາກໍຄົງຈະໄດ້ໃນອາລົມ romantic ດົນ ແຕ່ວ່າຈັກຝົນອີຫຍັງ? ຕົກບໍ່ຍອມເຊົາ ແຖມມີທີທ່າວ່າຈະແຮງຂຶ້ນອີກ ພວກເຮົາກະເລີຍພາກັນເຂົ້າໄປໃນເຮືອນ ຊຶ່ງຕໍ່ແຕ່ນັ້ນ ກ່ວາພວກເຮົາຈະໄດ້ມີໂອກາດຢູ່ຄຽງຄູ່ກັນອີກ ກໍຕໍ່ເມື່ອເຂົາປະກາດໂທລະໂຄ່ງວ່າ ພວກທີ່ຈະໄປພະນັດນິຄົມໃຫ້ຂົນເຄື່ອງຂຶ້ນມາດຽວນີ້ ເພາະລົດມາແລ້ວ ແລະຈະອອກເດີນທາງໃນຕອນສອງໂມງນີ້ ແທນທີ່ຈະເປັນສີ່ໂມງຄືຕາມທີ່ບອກໄວ້ແຕ່ກ່ອນ

ຫລັງຈາກຈັດເຄື່ອງຢູ່ຂອງກິນໄວ້ໃຫ້ຂ້ອຍກິນໃນຕອນແລງ (ຊຶ່ງສິ່ງນີ້ເຮັດໃຫ້ຂອ້ຍຊື້ງໃນນໍ້າໃຈເຈົ້າຈົນນໍ້າຕາໄຫລຜ່າຫນ່ອຍ) ແລະຂົນເຄື່ອງຂົນຂອງໃສ່ລົ້ຫມົດແລ້ວ ຂ້ອຍກໍພະຍາຍາມຫາໂອກາດຢູ່ນໍາເຈົ້າສອງຕໍ່ສອງ ເພື່ອຈະໄດ້ສັ່ງລາເປັນຄັ້ງສຸດທ້າຍ ແຕ່ກໍບໍ່ມີໂອກາດຈັກເທື່ອ ດ້ວຍວ່າທັງໃນເຮືອນແລະເຮືອນຄົວຕ່າງກໍມີຄົນຢູ່ ຈຶ່ງຈໍາເປັນທີ່ຂ້ອຍຈະຕ້ອງປະໃຫ້ການຈາກລາຂອງພວກເຮົາເທື່ອສໍາຄັນນີ້ ບໍ່ມີວາຈີອາໄລຮັກທີ່ກັ່ນກອງອອກມາຈາກສ່ວນເລິກຂອງຫົວໃຈໄດ້

## ຕອນທີສາ ແລະແລ້ວວັນເວລາທີ່ພາກຈາກກັນກໍວຽນມາເຖິງ



ຈາກຊ້າຍມາຂວາ
ແຖວຢືນ: ເຊັບ, …, ຂ້ອຍ, …, ສິນ, ວົງຄຳ, ມັດທຸ, ຫວັນ, ແດງ, ຕຸ້ຍ, ໃຫຍ່, ເຈົ້າ, …, ຕິ໋ວ, …,
ແຖງນັ່ງ: ແບ້, ນຸກ, ແຖວ, ຮັກ, …

ຂ້ອຍຈື່ວ່າ ພວກເຮົາໄປຮອດຫນ້າສູນປະມານໂມງປາຍ ຕອນນັ້ນມີຄົນມາເຕັມແລ້ວ
ທັງພວກຊິໄປແລະພວກມາສົ່ງ ເວລາໃນຕອນນັ້ນ ຄືຈັ່ງວ່າຕິດປີກບິນໄວແທ້ໆ
ບໍ່ທັນທີ່ຈະຖ່າຍຮູບລວມຮອດໂປ້ທີສີ່ຊ້ຳ ເຈົ້າຫນ້າທີ່ສະຫະປະຊາຊາດກໍເອີ້ນຄົນຂຶ້ນລົດ
ແລະກ່ອນເຈົ້າຈະແຍກຍ້າຍຈາຫມູ່ໄປຂຶ້ນລົດ
ຂ້ອຍກໍດຶ່ງເອົາຜ້າຍຜູກແຂນເສັ້ນນຶ່ງທີ່ແມ່ຂ້ອຍສົ່ງມາໃຫ້ແຕ່ອະເມຣິກາ
ເພື່ອເປັນສິຣິມົງຄົນແກ່ຊີວິດ ແລະເຈົ້າເປັນຜູ້ຜູກໃຫ້ຂ້ອຍກ່ອນຫນ້ານັ້ນ ອອກມາຜູກໃຫ້ເຈົ້າ
ທ່າມກາງສາຍຕາຢາກຮູ້ຢາກເຫັນຂອງຄົນອ້ອມໆຂ້າງ ທີ່ແນມມາເບິ່ງພວກເຮົາເປັນຈຸດດຽວ
ຫລັງຈາກຜູກແຂນໃຫ້ເຈົ້າແລ້ວ ຂ້ອຍກໍຈົກເອົາເຈັ້ຽແຜ່ນນ້ອຍນຶ່ງຈາກຖົງເສື້ອໃຫ້ເຈົ້າ ຊຶ່ງເຈັ້ຽໃບນີ້
ຂ້ອຍຂຽນຂໍ້ຄວາມສັ້ນໆ ຊຶ່ງເຖິງຈະສັ້ນປານໃດ ແຕ່ຖ້າຂ້ອຍອ່ານເທື່ອໃດແລ້ວ
ຂ້ອຍກໍອົດເຊື່ອງຊື່ມຄິດເຖິງເຈົ້າບໍ່ໄດ້

### ໄປແລ້ວ...ໄກສຸດໄກ

ວັນເວລາມາເຖິງແລ້ວ ທີ່ຮັກ
ສາຍລົມໄຊຍຊື່ນໂບກພັດ
ແສງສີທອງປະທັບແສງຮອງໆບົນຜິວພື້ນ
ບໍ່ດົນ ທັງສາຍລົມແລະແສງແດດ ກໍຈະຊື່ມຊາບເຂົ້າໄປໃນຜິວກາຍຂອງເຈົ້າ
ເມື່ອເຖິງເວລານັ້ນ ເຈົ້າກໍຈະຈາກຂ້ອຍໄປໄກຈົນສຸດຂອບຟ້າ

ແລະນັບວັນ ລະຍະທາງເດີນຂອງພວກເຮົາ ກໍຈະເພີ້ມທະວີຄູນ
ຕໍ່ໄປນີ້ ຈະມີພຽງຈົດຫມາຍເປັນສື່ສຳພັນ
ທີ່ລາຍມືປາກົດເປັນໃບຫນ້າ ດວງຕາແລະຮອຍຍີ້ມໃຫ້ຝັນເຫັນ



ຈາກຊ້າຍມາຂວາ
ແຖວຢືນ: ນຸກ (ບໍ່ເຫັນຮອດຫນ້າ), ..., ຕຸ້ຍ, ແດງ, ຂ້ອຍ, ເຈົ້າ, ຕິ໋ວ, ໃຫຍ່, ວົງຄຳ, ແບ້, ແມ່, ແມ່ມັດທຸ, ສີນ, ຫລ້າ, ..., ພໍ່, ເຊັບ
ແຖວນັ່ງ: ພອນ, ຫວັນ, ຫນ່ອຍ, ..., ມັດທຸ

ພໍເມື່ອໄດ້ເວລາ ຫລັງຈາກລົດຄັນທີນຶ່ງແລະຄັນທີສອງອອກໄປແລ້ວ ລົດຂອງເຈົ້າກໍຕິດເຄື່ອງ
ໃນບັດດົນນັ້ນ ຫົວໃຈຂອງຂ້ອຍກໍຫລົ່ນວູບຄ້າຍໆກັບວ່າ ຊີວິດຈະເຫລືອພຽງແຕ່ຮ່າງ
ຂ້ອຍແນມເບິ່ງຫມູ່ຄູ່ຜູ້ຍິງຂອງເຈົ້າແລ່ນເຂົ້າໄປຈັບໄມ້ຈັບມືເຈົ້າດ້ວຍຫົວໃຈອາບວີວ
ນາງແດງເລີ້ມນ້ຳຕາຜ່າຫນ່ວຍກ່ອນຫມູ່ ແລະກໍຄົງມີອີກຫລາຍໆຄົນ
ນີ້ພຽງແຕ່ເຈົ້າບໍ່ຂໍຮ້ອງໃຫ້ຂອ້ຍບໍ່ຕ້ອງໄຫ້ ນ້ຳຕາຂ້ອຍກໍຄົງຈະພານໄຫລອອກມາໃຫ້ໄດ້
ເພາະເຫດການພັດພາກຈາກກັນ ມັນຊ່າງສະເທືອນໃຈຂ້ອຍເຫລືອເກີນ



ຈາກຊ້າຍມາຂວາ: ເຈົ້າ, ເຊັບ, ຫວັນ, ຫນ່ອຍ, ນຸກ, ແມ່, ພໍ່, ຂ້ອຍ
ແລະຄົນໄທທີ່ປະຈຳການຢູ່ໃນສູນ

ຫລາຍເທື່ອຂ້ອຍພະຍາຍາມກັ້ນນ້ຳຕາເອົາໄວ້ ແລະຍີ້ມຫົວແທນທີ
ມີໃຜຜູ້ນື່ງຢູ່ຂ້າງໆເວົ້າຢອກຂ້ອຍວ່າ "ຫັ້ນເດ ໃກ້ຊິນ້ຳຕາອອກແລ້ວ" ຂ້ອຍເຮັດຄືຫູບໍ່ໄດ້ຍິນ
ແລ້ວກໍເບືອນຫນ້າຫນີ ຂ້ອຍຢາກຈະເຂົ້າໄປຈັບມືເຈົ້າ ແຕ່ກະຢ້ານນ້ຳຕາໄຫລຜ່າອອກມາ
ຈື່ງໄດ້ແຕ່ເຝົ້າມອງໃບຫນ້າເຈົ້າແຕ່ໄກ ຈົນລົດເລີ້ມເຄື່ອນອອກ ທັງຫມົດທີ່ຂ້ອຍເຮັດໄດ້
ກໍມີພຽງໂບກມືໄຫວ່ໆໃຫ້ເຈົ້າ ໃຜຜູ້ນື່ງອີກເວົ້າວ່າ "ຊ່າງໃຈແຂງແທ້ໆ ທັງສອງຄົນເລີຍ"
ແຕ່ໃນໃຈຂ້ອຍ ໃຜຈະຮູ້ແດ່ບໍ່ນໍວ່າ ມັນຮ້ອງໄຫ້ ບໍ່ຢາກໃຫ້ເຈົ້າຈາກໄປຂນາດໃດ
ຄວາມຮັກຍາມເມື່ອຕ້ອງພັດພາກຈາກກັນ ມັນຊ່າງທໍຣະມານຫົວໃຈຜູ້ທີ່ຮັກກັນເຫລືອເກີນ

ພໍເມື່ອລົດຫວິດປະຕູອອກໄປ ຄົນທີ່ມາສົ່ງສ່ວນຫລາຍຕ່າງກໍທະຍອຍກັນກັບ
ແຕ່ຂ້ອຍກໍຍັງຫວັງທີ່ຈະເຫັນເຈົ້າອີກ ແມ້ຈະພຽງຫລັງລົດຂອງເຈົ້າກໍຕາມ
ຂ້ອຍໄດ້ມາຢືນຢູ່ໃກ້ປ້ອມຍາມຕໍາລວດ ໂບກມືໄປມາ
ເມື່ອເຫັນອີກມືນື່ງເດ່ອອກມາຈາກລົດໂບກຕອບ ລົດຂອງເຈົ້າເຄື່ອນອອກໄປບໍ່ພໍເທົ່າໃດຮ້ອຍແມັດ
ກໍຢຸດຢູ່ຂ້າງຫລັງລົດຄັນທີນື່ງແລະທີສອງ
ເບິ່ງຊົງຄືຊິແມ່ນລໍຖ້າລົດຄັນອື່ນໆທີ່ຍັງບໍ່ທັນອອກຈາກສູນອີກສາມຄັນ
ຕອນນັ້ນຂ້ອຍມາຢືນຢູ່ໂຮງຫມໍກັບທ້າວແບ້ທ້າວສິນ ເບິ່ງວ່າຂອ້ຍຈະມີໂອກາດເຫັນເຈົ້າອີກບໍ່?
ຫລືຢ່າງນ້ອຍກໍຂໍໃຫ້ເຫັນລົດຂອງເຈົ້າເລື່ອນລັບຈາກສາຍຕາໄປກ່ອນ ຈື່ງຄ່ອຍເມືອ
ຕອນນັ້ນມີຫລາຍຄົນລົງຈາກລົດເພື່ອໄປເບົາ ແນັດຂອງຂ້ອຍກໍເປັນນື່ງໃນຈໍານວນນັ້ນທີ່ລົງມາ
ແຕ່ເຈົ້າບໍ່ໄດ້ໄປເບົາ ເຈົ້າຢືນຢູ່ຊື່ໆແລະຍີ້ມຕອບໃຫ້ຂອ້ຍ

ດ້ວຍຄວາມບໍ່ຄາດຝັນ ເຈົ້າກໍແລ່ນມາຫາຂ້ອຍພ້ອມດ້ວຍຫວັນ ແລະນຸກມາຫາແຖວ
ຕອນນັ້ນຂ້ອຍດີໃຈຈົນບໍ່ນຶກວ່າ ມັນເປັນຄວາມຈິງຫລືຄວາມຝັນກັນແທ້
ພາບທີ່ເຈົ້າພາຮ່າງຄີງອັນອ່ອນຊ້ອຍປີວວ່ອນມາກັບສາຍລົມ
ບໍ່ຕ່າງຫຍັງກັບພາບນາງຟ້າລ່ອງລອຍລົງມາຈາກສວັນ
ມັນຊ່າງງາມແລະປະທັບໃຈຂ້ອຍເຫລືອເກີນ ເມື່ອເຈົ້າມາຮອດຫນ້າປະຕູໃຫຍ່ທາງອອກສູນ
ຂ້ອຍກໍໄດ້ມາຢືນຢູ່ຫັ້ນກ່ອນແລ້ວ ເສັຽດາຍເຫລືອເກີນທີ່ຊ່ວງເວລານັ້ນ ຊ່າງສັ້ນເຫລືອເກີນ
ເຈົ້າທັນແຕ່ບອກຂ້ອຍວ່າ "ຂອ້ຍໄປກ່ອນເດີ ອ້າຍແກ້ວ" ເພາະຄົນທີ່ຢູ່ລົດເຈົ້າພຸ້ນກັວກມືເອີ້ນກັບ
ແລະກ່ອນທີ່ເຈົ້າຈະອ່ວາຍກັບ ຂ້ອຍກໍທັນຄິດໄດ້ວ່າ
ຂ້ອຍຄວນຈະເຮັດສິ່ງໃດສິ່ງນື່ງເພື່ອເປັນເຄື່ອງຫມາຍແຫ່ງການຈາກກັນເທື່ອນີ້

ຂ້ອຍຈຶ່ງເດ່ມືອອກມານອກຮົ້ວ ແລະຂໍຈັບມືກັບເຈົ້າ ຊຶ່ງເຈົ້າກໍໃຫ້ຈັບໂດຍດີ
ຊຶ່ງການຈັບມືຂອງເຮົາສອງເທື່ອນີ້ ມີຄວາມຫມາຍທີ່ສຸດ
ດ້ວຍແມ້ແຕ່ລວດຫນາມທີ່ຂວາງກັ້ນຜູ້ຄົນທົ່ວໄປໄດ້
ກໍຍັງບໍ່ສາມາດທີ່ຈະຂວາງກັ້ນຄວາມຮັກຂອງເຮົາສອງໄດ້ ແມ້ແຕ່ຫນ້ອຍດຽວເລີຍ...

**ຈິບບໍຣິບຸນ**




*ຂ້າງຫລັງ*
*ພາບທີ່ເຈົ້າ*
*ມອບໃຫ້ຂ້ອຍ*
*ກ່ອນຈາກນັ້ນ*
*ຂຽນວ່າ:*

*ຂໍມອບຮູບແຜ່ນນີ້ໃຫ້ອ້າຍແກ້ວ*

*ຂ້ອຍຊິບໍ່ລືມເລີຍວ່າ ເຈົ້າຄືຜູ້ທີ່ໃຫ້ຄວາມຫວັງດີ*

*ຄວາມເຂົ້າໃຈແລະໃຫ້ຄວາມຮັກແກ່ຂ້ອຍ*

*ຄວາມດີຂອງເຈົ້າ ຂ້ອຍຂໍຈົດຈໍາຕລອດໄປ*

ແລະສິ່ງນີ້ເອງຄືສິ່ງທີ່ຍຶດຫນ່ຽວເຈົ້າຕໍ່ຂ້ອຍ ຕາບຈົນເທົ່າເຖິງທຸກວັນນີ້

6/17/05